ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****

ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ

VIENTIANE CENTER
ວຽງຈັນເຊັນເຕີ

ເລກທີ:...007.../ວຈຊຕ
ນະຄອນຫຼວງວຽງຈັນ, ວັນທີ:..07/03/2025

ຮຽນ: **ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບ ລາວ ທີ່ນັບຖື.**

ເລື່ອງ: **ແຈ້ງກຳນົດມື້ປິດປຶ້ມບັນຊີທະບຽນຜູ້ຖືຮຸ້ນ (Record Date) ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືກຮຸ້ນ ປະຈຳປີ 2024.**

- ອີງຕາມ ມະຕິກອງປະຊຸມສະພາບໍລິຫານ ສະໄໝວິສາມັນ ຄັ້ງທີ 1/2025 ຂອງ ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ, ຄັ້ງວັນທີ 6 ມີນາ 2025.

ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ (ວຈຊຕ) ຂໍຖືເປັນກຽດແຈ້ງມາຍັງທ່ານ ກ່ຽວກັບການກຳນົດມື້ປິດປຶ້ມບັນຊີທະບຽນຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືກຮຸ້ນ ປະຈຳປີ 2024 ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

- ມື້ປິດປຶ້ມບັນຊີທະບຽນຜູ້ຖືຮຸ້ນ: 21/03/2025
- ວັນ ແລະ ເວລາ: 29/04/2025, ເວລາ 14:00 - 17:00 ໂມງ
- ສະຖານທີ່: ຫ້ອງປະຊຸມ Diamond room ຊັ້ນ 4 ໂຮງແຮມແລນມາກ
- ວາລະກອງປະຊຸມ:
  1) ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມວິສາສາມັນຜູ້ຖືຮຸ້ນປະຈຳປີ 2023;
  2) ພິຈາລະນາ ແລະ ຮັບຮອງບົດລາຍງານການເງິນຂອງ ວຈຊຕ ປະຈຳປີ 2024;
  3) ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດປະຈຳປີ 2024 ແລະ ແຜນການດຳເນີນທຸລະກິດປະຈຳປີ 2025 ຂອງ ວຈຊຕ;
  4) ພິຈາລະນາ ແລະ ຮັບຮອງແຜນການຈັດສັນຜົນກຳໄລສຸດທິ ປະຈຳປີ 2024 ;
  5) ພິຈາລະນາ ການແຕ່ງຕັ້ງບໍລິສັດກວດສອບບັນຊີພາຍນອກ ປະຈຳປີ 2025;
  6) ພິຈາລະນາ ແລະ ຮັບຮອງການຊັບປ່ຽນ ສະມາຊິກສະພາບໍລິຫານ;
  7) ພິຈາລະນາ ແລະ ຮັບຮອງການປັບປ່ຽນ ຄະນະກຳມະການກວດສອບຂອງ ວຈຊຕ;
  8) ພິຈາລະນາ ແລະ ຮັບຮອງການດັດແກ້ກົດລະບຽບ ຂອງ ບໍລິສັດ ມາດຕາ 9 ວ່າດ້ວຍຜູ້ອຳນວຍການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ
  9) ພິຈາລະນາ ແລະ ຮັບຮອງການປັບປ່ຽນຜູ້ຕາງໜ້ານິຕິບຸກຄົນຂອງບໍລິສັດ ວຈຊຕ
  10) ເລື່ອງອື່ນໆ (ຖ້າມີ).

ດັ່ງນັ້ນ, ຈຶ່ງຮຽນແຈ້ງມາຍັງທ່ານເພື່ອຊາບ ແລະ ເຫັນບ່ອນອີງໃນການດຳເນີນການດ້ວຍ.

ດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ,

ຜູ້ອຳນວຍການໃຫຍ່



Wang Wei Kun

ຜູ້ປະສານງານ:

ທ່ານ.ອັກສອນສິນ ສິດທິພອນ, ໂທ:020-58021614